# ອະນຸສັນຍາເພີ່ມເຕີມ " ສັນຍາວ່າດ້ວຍລະບຽບການຊາຍແດນ ລະຫວ່າງ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ສາທາລະນະລັດ ປະຊາຊົນ ຈີນ "

ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ສາທາລະນະລັດ ປະຊາຊົນຈີນ ( ຕໍ່ໄປນີ້ເອີ້ນຫຍໍ້ວ່າ " ສອງຝ່າຍ " ), ບົນຈິດໃຈເຄົາລົບນັບຖືເຊິ່ງກັນ ແລະ ກັນ, ມິດຕະພາບ ແລະ ການຮ່ວມໄມ້ຮ່ວມມືກັນ, ເພື່ອປະຕິບັດ " ສັນຍາວ່າດ້ວຍລະບຽບການຊາຍແດນ ລະຫວ່າງ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ສາທາລະນະລັດ ປະຊາຊົນຈີນ " ( ຕໍ່ໄປນີ້ເອີ້ນຫຍໍ້ວ່າ " ສັນຍາລະບຽບການຊາຍແດນ " ) ໃຫ້ດີກວ່າເກົ່າ, ເພື່ອແກ້ໄຂສະພາບໃຫມ່, ບັນຫາໃຫມ່ ທີ່ເກີດຂື້ນໃນຂະບວນວິວັດແຫ່ງການປະຕິບັດ " ສັນຍາລະບຽບການຊາຍແດນ ", ຕົກລົງທຳອະນຸສັນຍາສະບັບນີ້ ແລະ ໄດ້ບັນລຸຕົກລົງບັນດາມາດຕາ ດັ່ງລຸ່ມນີ້ :

## <u>ມາດຕາ 1</u>

1. ອີງຕາມຂໍ້ກຳນົດໃນ " ສົນທິສັນຍາຊາຍແດນ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ປະຊາຊົນຈີນ ", " ອະນຸສັນຍາວ່າດ້ວຍເສັ້ນຊາຍແດນ 2 ປະເທດ ລະຫວ່າງ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ສາທາລະນະລັດ ປະຊາຊົນຈີນ " ແລະ " ສັນຍາລະບຽບການຊາຍແດນ ", ຄູ່ສັນຍາເຫັນພ້ອມຈະທຳການສ້ອມແປງໂດຍໄວຫລັກ ຫມາຍຊາຍແດນທີ່ຖືກເປ່ເພ ຊຶ່ງຕ່າງຝ່າຍຕ່າງຮັບຜິດຊອບ.

2. ໃນກໍລະນີ ບາງຫລັກຫມາຍຊາຍແດນທີ່ມີຄວາມຫຍຸ້ງຍາກ ໃນການດຳເນີນການກວດກາ ແລະ ສ້ອມແປງໃນເຂດແດນຂອງປະເທດຕົນນັ້ນ, ອີກຝ່າຍນຶ່ງຈະອຳນວຍຄວາມສະດວກໃຫ້ແກ່ຝ່າຍທີ່ຈະດຳເນີນການກວດກາແລະສ້ອມແປງນັ້ນ ຜ່ານເຂດແດນຂອງຕົນ ເພື່ອໄປເຖິງຫລັກຫມາຍຊາຍແດນ. ແຕ່ຝ່າຍທີ່ຈະດຳເນີນການກວດກາແລະສ້ອມແປງນັ້ນ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ອີກຝ່າຍນຶ່ງຊາບລ່ວງຫນ້າ 10 ວັນ, ໂດຍແຈ້ງຫນ້າທີ່, ວັນເວລາ, ຈຳນວນຄົນ, ຍານພາຫະນະ, ເສັ້ນທາງເພື່ອໄປເຖິງຫລັກຫມາຍຊາຍແດນ, ວັດຖຸ ແລະ ເຄື່ອງມືຮັບໃຊ້ ແລະ ອື່ນໆ , ເມື່ອໄດ້ຮັບການຕົກລົງເຫັນດີຈາກອີກຝ່າຍນຶ່ງແລ້ວ ຈຶ່ງໄປປະຕິບັດໄດ້.

## ມາດຕາ 2

1. ທັງສອງຝ່າຍຕ້ອງເພີ້ມທະວີການສຶກສາອົບຮົມປະຊາຊົນຕາມເຂດຊາຍແດນຂອງຕົນ, ພ້ອມທັງໃຊ້ມາດຕະການເກືອດຫ້າມ ການຂ້າມຜ່ານແດນແບບຜິດກົດຫມາຍ. ສໍາລັບຜູ້ທີ່ຂ້າມ ຜ່ານຊາຍແດນແບບຜິດກົດຫມາຍ, ຜູ້ຢູ່ເກີນກໍານົດເວລາ ຫລື ຜູ້ຍົກຍ້າຍຕັ້ງພູມລໍາເນົາແບບຜິດກົດຫມາຍນັ້ນ, ທັງສອງຝ່າຍຈະແຈ້ງສະພາບການໃຫ້ກັນຊາບຢ່າງທັນການ, ພ້ອມທັງຂໍ້ມູນລະອຽດ ກ່ຽວກັບ ຜູ້ກ່ຽວຂ້ອງ, ນໍາສົ່ງ ຫລື ນໍາມອບໂດຍໄວ. ສ່ວນວຽກງານລະອຽດໃຫ້ພາກສ່ວນກ່ຽວຂ້ອງຂອງທັງສອງຝ່າຍ ຮ່ວມກັນປຶກສາຫາລືເພື່ອແກ້ໄຂ.

2. ເຈົ້າຫນ້າທີ່ປະຕິບັດກົດຫມາຍ ຂອງທັງສອງຝ່າຍຕ້ອງປະຕິບັດຫນ້າທີ່ຂອງຕົນ ຕາມກົດຫມາຍ, ຫ້າມເດັດຂາດບໍ່ໃຫ້ທຸບຕີທໍລະມານ ແລະ ກວດຄົ້ນໂຕແບບຜິດກົດຫມາຍ ແລະ ການກະທໍາອື່ນໆທີ່ຜິດກົດຫມາຍ, ສ່ວນ ເຈົ້າຫນ້າທີ່ຜູ້ກະທໍາຜິດ ຈະໄດ້ຖືກດໍາເນີນຕາມກົດຫມາຍຂອງປະເທດຕົນ.

3. ສໍາລັບບັນຫາທີ່ກ່ຽວຂ້ອງກັບຜູ້ຂ້າມແດນ ສ້າງຄອບຄົວ ແລະ ລູກເຂົາເຈົ້ານັ້ນ, ທັງສອງຝ່າຍ ຈະປະຕິບັດຕາມກົດຫມາຍທີ່ກ່ຽວຂ້ອງ ຂອງປະເທດທີ່ເຂົາເຈົ້າອາໄສຢູ່ ເພື່ອແກ້ໄຂຢ່າງເຫມາະສົມ.

## ມາດຕາ 3

ກໍານົດເວລາຂອງ ຝ່າຍລາວ ທີ່ອະນຸຍາດໃຫ້ຜູ້ຖືໃບຜ່ານແດນຂອງຝ່າຍຈີນແມ່ນ 10 ວັນ ແລະ ຂໍອະນຸຍາດຕໍ່ໄດ້ອີກ 5 ວັນ, ກໍານົດເວລາຂອງຝ່າຍຈີນ ທີ່ອະນຸຍາດໃຫ້ຜູ້ຖືໃບຜ່ານແດນຂອງຝ່າຍລາວແມ່ນ 15 ວັນ. ສໍາລັບຜູ້ທີ່ຢູ່ເກີນກໍານົດເວລາແບບຜິດກົດຫມາຍ, ທັງສອງຝ່າຍ ຈະດໍາເນີນການປັບໃຫມໂດຍອີງຕາມກົດຫມາຍຂອງປະເທດຕົນ.

## ມາດຕາ 4

1. ທັງສອງຝ່າຍກໍານົດເປັນເອກະພາບນໍາກັນ ໂມງປະຕິບັດງານຂອງດ່ານ, ແມ່ນແຕ່ວັນຈັນ ເຖິງວັນທິດ, ໂມງເປີດດ່ານໃນແຕ່ລະວັນແມ່ນ ເວລາວຽງຈັນ 7.30 ໂມງ, ເວລາປັກກິ່ງ 8.30 ໂມງ. ໂມງປິດດ່ານແມ່ນ ເວລາວຽງຈັນ 16.30 ໂມງ, ເວລາປັກກິ່ງ 17.30 ໂມງ. ຕອນທ່ຽງບໍ່ພັກຜ່ອນ, ວັນພັກບຸນມີຜູ້ປະຈໍາການ.

2. ເພື່ອຄວາມສະດວກໃນການຄຸ້ມຄອງ ຂອງອົງການກວດກາຂອງທັງສອງຝ່າຍ ໃນດ້ານຫລັກການແລ້ວ, ສຳລັບຜູ້ອອກເມືອງຂອງທັງສອງຝ່າຍທີ່ຖືໃບຜ່ານແດນ ຕ້ອງກັບຄືນປະເທດຕົນ ຕາມດ່ານທີ່ຕົນອອກໄປນັ້ນ.

3. ໃນກໍລະນີທີ່ຈຳເປັນແລະຮີບດ່ວນ ເປັນຕົ້ນ: ກູ້ໄພ, ຊ່ວຍກູ້ຊີວິດຄົນເຈັບ ແລະ ຈັບຜູ້ກະທຳຜິດກົດໝາຍນັ້ນ, ດ່ານຕ້ອງເປີດທຸກເວລາ ໂດຍໃຫ້ຍົກເວັ້ນຄ່າທຳນຽມ, ແຕ່ຝ່າຍທີ່ຂໍເຂົ້າແດນຕ້ອງແຈ້ງໃຫ້ເຈົ້າໜ້າທີ່ດ່ານທີ່ກ່ຽວຂ້ອງຂອງຝ່າຍຕົງຂ້າມຊາບລ່ວງໜ້າ ເພື່ອອຳນວຍຄວາມສະດວກຕາມຄວາມເໝາະສົມ.

## ມາດຕາ 5

1. ທັງສອງຝ່າຍຈະເກັບຄ່າຕ່າງໆທັງໝົດຄັ້ງດຽວ ສຳລັບບຸກຄົນ, ຍານພາຫະນະ ແລະ ວັດຖຸສິນຄ້າ ໂດຍອີງຕາມກົດໝາຍ ຂອງປະເທດຕົນ ຢູ່ຕາມດ່ານທີ່ໄດ້ກຳນົດໄວ້ ແລະ ອອກໃບບິນຢັ້ງຢືນເກັບເງິນໃຫ້ເພື່ອຫລີກລ່ຽງບໍ່ໃຫ້ມີການເກັບຊະຊາຍ, ເກັບຊ້ຳຊ້ອນ ແລະ ເກັບທີ່ບໍ່ມີໃບບິນຢັ້ງຢືນ.

2. ຜູ້ທີ່ຖືໃບບິນຢັ້ງຢືນການເສຍຄ່າຕ່າງໆທີ່ກ່າວຢູ່ໃນ ຂໍ້ 1 ຂອງ ມາດຕານີ້ ມີສິດປະຕິເສດການເກັບຄ່າຕ່າງໆແບບຊ້ຳຊ້ອນຂອງພາກສ່ວນອື່ນອີກ.

3. ເພື່ອເຮັດໃຫ້ລາຍການແລະມາດຕະຖານການເກັບຄ່າ ໄນັ້ມໄປສູ່ຄວາມເປັນເອກະພາບກັນ, ທັງສອງຝ່າຍ ຄວນແຈ້ງໃຫ້ກັນຊາບ ກ່ຽວກັບ ລາຍການແລະມາດຕະຖານ ສຳລັບ ການເກັບຄ່າທຳນຽມ ແລະ ພາສີ ຕໍ່ບຸກຄົນ, ຍານພາຫະນະ ແລະ ວັດຖຸສິນຄ້າ ທີ່ເຂົ້າອອກເມືອງ.

## ມາດຕາ 6

ທັງສອງຝ່າຍຈະຈັດຕັ້ງ ຫລື ປັບປຸງອົງການກວດກາໃຫ້ເທົ່າທຽມກັນ ຫລື ຈັດສົ່ງພະນັກງານໄປປະຈຳດ່ານທີ່ໄດ້ເປີດແລ້ວຕາມທີ່ຄວນ.

## ມາດຕາ 7

1. ອົງການປະຕິບັດກົດໝາຍຂອງທັງສອງຝ່າຍຈະປຶກສາຫາລືຕົກລົງແບບວິທີການຮ່ວມມືລະອຽດ ເພື່ອພ້ອມກັນປາບປາມການປູກຝິ່ນ, ການຄ້າຂາຍຢາເສບຕິດ, ການຄ້າຂາຍເຖື່ອນ ຕາມເຂດຊາຍແດນ.

2. ເພື່ອລົບລ້າງການປູກຝິ່ນຢ່າງສິ້ນເຊີງ, ທັງສອງຝ່າຍຈະສົ່ງເສີມວິສາຫະກິດ ແລະ ບໍລິສັດຂອງຝ່າຍຕົນຮ່ວມມືກັນປູກພືດທົດແທນ ຕາມເຂດຊາຍແດນ ພ້ອມທັງມີນະໂຍບາຍພິເສດ ເພື່ອສົ່ງເສີມການປູກພືດທົດແທນດັ່ງກ່າວ ແລະ ການດຳເນີນທຸລະກິດທີ່ກ່ຽວຂ້ອງ ເພື່ອຍົກເວັ້ນຫລືຫລຸດຜ່ອນພາສີ ໂດຍສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງຂອງແຕ່ລະປະເທດ.

## ມາດຕາ 8

1. ເພື່ອຊຸກຍູ້ເສດຖະກິດຕາມເຂດຊາຍແດນໃຫ້ຂະຫຍາຍຕົວ, ທັງສອງຝ່າຍຕົກລົງເຫັນພ້ອມນຳກັນວ່າ ຕ່າງຝ່າຍຈະອຳນວຍຄວາມສະດວກ ໃນການຂໍຜ່ານແດນຕາມເຂດຊາຍແດນ ສຳລັບບຸກຄົນ, ຍານພາຫະນະຂົນສົ່ງ ແລະ ວັດຖຸສິນຄ້າຂອງອີກຝ່າຍນຶ່ງ. ສຳລັບການເດີນທາງຜ່ານໄປປະເທດທີ 3 ຕາມທາງບົກ ແລະ ທາງນ້ຳ ນັ້ນ ແມ່ນໃຫ້ປະຕິບັດຕາມສັນຍາ 2 ຝ່າຍ ຫລື ຫລາຍຝ່າຍ ໃນສັນຍາຮ່ວມມືດ້ານການຂົນສົ່ງຜ່ານແດນ.

2. ການຮ້ອງຂໍ ກ່ຽວກັບການຂໍຜ່ານແດນນັ້ນ ແມ່ນໃຫ້ຝ່າຍຮ້ອງຂໍສະເໜີຕໍ່ອົງການທ້ອງຖິ່ນທີ່ກ່ຽວຂ້ອງຂອງປະເທດທີ່ຕົນຈະຜ່ານແດນນັ້ນລ່ວງໜ້າ 10 ວັນ ໂດຍແຈ້ງວັນເວລາຜ່ານແດນ ແລະ ຈຳນວນຄົນ. ພາຍຫລັງໄດ້ຮັບການຕົກລົງເຫັນດີແລ້ວ ຈຶ່ງດຳເນີນໄດ້. ບຸກຄົນ ແລະ ວັດຖຸສິນຄ້າທີ່ຜ່ານແດນນັ້ນ ຕ້ອງຜ່ານເສັ້ນທາງແລະດ່ານທາງບົກ, ທາງນ້ຳ ທີ່ໄດ້ກຳນົດໄວ້, ສຳລັບບຸກຄົນບໍ່ໃຫ້ຢູ່ຄ້າງຕາມທາງ, ສ່ວນວັດຖຸສິນຄ້າຈະຕ້ອງຮັບການກວດກາ ຈາກດ່ານພາສີ ຂອງປະເທດທີ່ຕົນ ຜ່ານ, ສິນຄ້ານັ້ນບໍ່ສາມາດຂົນອອກ ແລະ ຄ້າຂາຍຕາມທາງໄດ້.

3. ຝ່າຍທີ່ຂໍຜ່ານແດນ ເມື່ອເຂົ້າໄປເຖິງດ່ານທີ່ປະເທດຕົນຜ່ານທາງນັ້ນ, ຕ້ອງຮັບການກວດກາຈາກອົງການກວດກາປະຈຳດ່ານ ພ້ອມທັງຈ່າຍຄ່າທຳນຽມທີ່ກ່ຽວຂ້ອງ. ອົງການກວດກາປະຈຳດ່ານຕ້ອງເຮັດໃບອະນຸຍາດຜ່ານແດນໃຫ້, ເມື່ອຈະອອກຈາກປະເທດທີ່ຕົນຜ່ານແດນ, ຝ່າຍທີ່ຂໍຜ່ານແດນ ພາຍຫລັງມອບຄືນໃບອະນຸຍາດຜ່ານແດນແລ້ວ, ອົງການກວດກາດ່ານຕ້ອງປ່ອຍທາງໃຫ້. ແຕ່ຖ້າຫາກວ່າມີການກະທຳທີ່ຝ່າຝືນຕາມການກຳນົດໃນຂໍ້ 2 ມາດຕານີ້, ອົງການກວດກາດ່ານທີ່ກ່ຽວຂ້ອງມີສິດປັບໄໝຕາມກົດໝາຍພາຍໃນຂອງໃຜລາວ.

4. ຝ່າຍທີ່ຂໍຜ່ານແດນນັ້ນ ຕ້ອງປະຕິບັດຕາມກົດໝາຍຂອງປະເທດ ທີ່ຕົນຜ່ານ, ຫ້າມ ດຳເນີນການຄ້າຂາຍເຖື່ອນ, ຄ້າຂາຍຢາເສບຕິດ ແລະ ການເຄື່ອນໄຫວອື່ນໆ ທີ່ຜິດກົດໝາຍ.

5. ທຸກການຂໍຜ່ານແດນທີ່ດຳເນີນໄປຕາມມາດຕານີ້, ປະເທດທີ່ໃຫ້ການຜ່ານແດນ ຕ້ອງ ອຳນວຍຄວາມສະດວກ, ຫ້າມດຳເນີນການຂັດຂວາງ ແລະ ກວດກາທີ່ຜິດກົດໝາຍ .

6. ທັງສອງຝ່າຍເກັບຄ່າທຳນຽມຜ່ານແດນທີ່ເອກະພາບກັນ, ແລະ ຕ້ອງເກັບຄັ້ງດຽວ. ມາດຕະຖານ ແລະ ວິທີການເກັບຄ່ານັ້ນ ມອບໃຫ້ເຈົ້າໜ້າທີ່ທ້ອງຖິ່ນຕົກລົງນຳກັນ.

## <u>ມາດຕາ 9</u>

1. ເພື່ອປະຕິບັດ " ສັນຍາລະບຽບການຊາຍແດນ " ໃຫ້ດີຍິ່ງຂຶ້ນ, ສອງຝ່າຍສ້າງຕັ້ງກົນໄກ ພົບປະຂອງຄະນະກຳມະການປະຕິບັດງານຮ່ວມສັນຍາລະບຽບການຊາຍແດນ ລາວ-ຈີນ.

2. ຄະນະກຳມະການດັ່ງກ່າວຮັບຜິດຊອບວຽກງານດັ່ງລຸ່ມນີ້ :

1. ບັນຫາໃຫຍ່ ແລະ ບັນຫາທີ່ອຳນາດການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວ ຂ້ອງບໍ່ສາມາດແກ້ໄຂໄດ້ໃນຂະບວນວິວັດແຫ່ງການປະຕິບັດສັນຍາ.
2. ເຫດການຮ້າຍແຮງ ທີ່ເກີດຂຶ້ນຕາມເຂດຊາຍແດນ ລາວ-ຈີນ
3. ບັນຫາການດັດແປງ ແລະ ເພີ່ມຕື່ມ ກ່ຽວກັບສັນຍາ
4. ບັນຫາອື່ນໆ ທີ່ທັງສອງຝ່າຍເຫັນວ່າຄວນປຶກສາຫາລືກັນ.

3. ຄະນະກຳມະການດັ່ງກ່າວປະກອບດ້ວຍຫົວໜ້າຄະນະຝ່າຍລະ 1 ທ່ານ ( ຂັ້ນກົມ ຂອງກະຊວງການຕ່າງປະເທດ ) ແລະ ກຳມະການຈຳນວນນຶ່ງ. ຄະນະກຳມະການ ປະຊຸມກັນປີລະ ເທື່ອ, ເມື່ອເກີດມີສະພາບຮີບດ່ວນ, ທັງສອງຝ່າຍສາມາດຮຽກປະຊຸມໄດ້ທຸກເວລາ. ກອງປະຊຸມຜັດ ປ່ຽນກັນດຳເນີນໃນເຂດແດນຂອງແຕ່ລະປະເທດ. ປະເທດທີ່ຕັ້ງກອງປະຊຸມນັ້ນຮັບຜິດຊອບທຸກການ ໃຊ້ຈ່າຍໃນໄລຍະການປະຊຸມ, ວັນເວລາ ແລະ ວາລະລະອຽດຂອງກອງປະຊຸມ ແມ່ນປຶກສາຫາລືໂດຍ ຜ່ານວິທີທາງການທູດ.

<u>ມາດຕາ 10</u>

ໂດຍອີງຕາມການກຳນົດໃນ ມາດຕາ 30 ຂອງ " ສັນຍາລະບຽບການຊາຍແດນ ", ອະນຸສັນຍາສະບັບນີ້ ເມື່ອມີຜົນບັງຄັບໃຊ້ແລ້ວ ກໍຖືເປັນພາກສ່ວນທີ່ບໍ່ສາມາດຕັດແຍກອອກໄດ້ຂອງ " ສັນຍາລະບຽບການຊາຍແດນ ".

ອະນຸສັນຍາສະບັບນີ້ ຈະມີຜົນບັງຄັບໃຊ້ນັບແຕ່ມື້ທີ່ໄດ້ຮັບການລົງນາມເປັນຕົ້ນໄປ.

ອະນຸສັນຍາເພີ່ມເຕີມສະບັບນີ້ ລົງນາມໃນວັນທີ 26 ສິງຫາ 1997 ທີ່ ປັກກິ່ງ, ເຮັດເປັນສອງສະບັບຕົ້ນ, ແຕ່ລະສະບັບຂຽນດ້ວຍພາສາລາວ ແລະ ພາສາຈີນ, ຊຶ່ງທັງສອງພາສາມີຄຸນຄ່າເທົ່າທຽມກັນ.

ຜູ້ຕາງໜ້າທີ່ມີອຳນາດເຕັມ
ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ຜູ້ຕາງໜ້າທີ່ມີອຳນາດເຕັມ
ແຫ່ງ ສາທາລະນະລັດ ປະຊາຊົນຈີນ

钱其琛